ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=======000=======

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 219 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 1 9 MAR 2015

ດ່ວນທີ່ສຸດ

ສຳນັກງານ ຄຄຊ
ເລກທີ 3044
ວັນທີ 1 9 MAR 2015
ໂທລະສັບ 021 217770

## ແຈ້ງການ

**ເຖິງ:** ບັນດາກົມ, ທຽບເທົ່າ, ພະນັກງານ ທະນາຄານແຫ່ງ ສປປ ລາວ ທີ່ນັບຖື.

**ເລື່ອງ:** ການທົດລອງນຳໃຊ້ເຄື່ອງກວດກາການເຂົ້າ-ອອກຂອງພະນັກງານ ທຫລ.

- ອີງຕາມພາລະບົດບາດ ແລະ ຂອບເຂດສິດໜ້າທີ່ຂອງຫ້ອງການ ທຫລ ເລກທີ 06/ທຫລ ລົງວັນທີ 25 ມີນາ 2005;
- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການ ທຫລ ເລກທີ 479/ທຫລ ວັນທີ 28 ພະຈິກ 2006;

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບວ່າ: ໄລຍະຜ່ານມາ ທຫລ ໄດ້ປັບປຸງລະບົບການເຂົ້າ-ອອກພາຍໃນສຳນັກງານ ປັດຈຸບັນໃກ້ຈະສຳເລັດແລ້ວ ເພື່ອເປັນການທົດລອງນຳໃຊ້ລະບົບດັ່ງກ່າວຈຶ່ງແຈ້ງໃຫ້ພະນັກງານ ທຫລ ທົດລອງນຳໃຊ້ເລີ່ມແຕ່ ວັນທີ 20 ມີນາ 2015 ເປັນຕົ້ນໄປ ຂັ້ນຕອນການຜ່ານແມ່ນ II ວິທີຄື:

1. ການຜ່ານດ້ວຍສະແກນລາຍນິ້ວມື;
2. ການຜ່ານດ້ວຍບັດ.

➢ ວິທີການນຳໃຊ້ລະບົບສະແກນລາຍນິ້ວມື.

- ພະນັກງານຕ້ອງໃສ່ລາຍນິ້ວມືຂອງຕົນທີ່ໄດ້ສະແກນເຂົ້າໃນລະບົບແປະຜ່ານເຄື່ອງຜ່ານດັ່ງກ່າວຈະມີສຽງດັງ Tank you ແລ້ວປະຕູຈະໄຂພາຍໃນ 5 ວິນາທີ ທ່ານຈຶ່ງຈະສາມາດຜ່ານໄປໄດ້ ໃນກໍລະນີບໍ່ຍ່າງຜ່ານປະຕູຈະປິດເອງພາຍໃນ 5 ວິນາທີ ໂດຍອັດຕະໂນມັດ, ຖ້າເຄື່ອງສຽງດັງວ່າ Verify Again Press ແມ່ນບໍ່ສາມາດຜ່ານໄດ້, ທ່ານຕ້ອງເຮັດຄືນໃໝ່. ໃນກໍລະນີພະນັກງານທ່ານໃດຫາກນຳໃຊ້ແລ້ວບໍ່ຜ່ານ ແມ່ນໃຫ້ແຈ້ງມາຍັງຫ້ອງການພະແນກບໍລິຫານຈະໄດ້ອຳນວຍຄວາມສະດວກໃຫ້ພາກສ່ວນກ່ຽວຂ້ອງມາແຊກລະບົບໃຫ້ທ່ານໃໝ່ ສ່ວນການເຂົ້າ-ອອກຊັ້ນໃນຂອງສຳນັກງານໃຫ້ຜ່ານ 3 ປະຕູຄື:

1. ປະຕູຕຶກໃຫຍ່ ທຫລ;
2. ປະຕູທາງເຂົ້າກົມບໍລິການ;
3. ປະຕູທາງຂຶ້ນທາງຂຶ້ນກົມ ເຕັກໂນໂລຢີ-ຂໍ້ມູນຂ່າວສານ. ສ່ວນປະຕູທາງຂຶ້ນກົມນະໂຍບາຍເງິນຕາປັດຈຸບັນແມ່ນຈະໄດ້ປິດ ແລະ ປະຕູອອກສຸກເສີນຕຶກ 4 ຊັ້ນຈະໄດ້ໃຊ້ສະເພາະສຸກເສີນເປັນທາງອອກເທົ່ານັ້ນ ບໍ່ສາມາດເຂົ້າໄດ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຮັບຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ຫົວໜ້າຫ້ອງການ ທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ພາລີ ພິມມະກອນ

<u>ໝາຍເຫດ:</u>

- ທຸກທ່ານຕ້ອງຈື່ນິ້ວມືໃດທີ່ໄດ້ສະແກນນິ້ວມືກັບບໍລິສັດ ໃຫ້ເອົານິ້ວນັ້ນສະແກນດັ່ງຮູບຂັດຕິດມາພ້ອມນີ້;
- ສ່ວນວິທີ 2 ຍັງຢູ່ໃນຂັ້ນຕອນປັບປຸງ.

ຮູບທີ 1



ຮູບທີ 2



ຮູບທີ 3

